**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ /ອຄ.ກນຄຕ

ນະຄອນຫຼວງວຽງຈັນ, ວັນທີ ......................

# ຄຳແນະນຳ

## ກ່ຽວກັບການຈັດຕັ້ງປະຕິບັດ ມາດຕາ 9 ຂອງ ກົດໝາຍວ່າດ້ວຍ ການປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນກະທົບຈາກການນຳເຂົ້າສິນຄ້າ ສະບັບເລກທີ 27/ສພຊ, ລົງວັນທີ 30 ຕຸລາ 2017

- ອີງຕາມ ກົດໝາຍວ່າດ້ວຍ ການປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນກະທົບຈາກການນຳເຂົ້າສິນຄ້າ, ສະບັບເລກທີ 27/ສພຊ, ລົງວັນທີ 30 ຕຸລາ 2017.

ເພື່ອຜັນຂະຫຍາຍເນື້ອໃນ ມາດຕາ 9 ຂອງກົດໝາຍວ່າດ້ວຍ ການປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນກະທົບຈາກການນຳເຂົ້າສິນຄ້າ ສະບັບເລກທີ 27/ສພຊ, ລົງວັນທີ 30 ຕຸລາ 2017 ໃຫ້ເປັນອັນລະອຽດ, ແທດເໝາະກັບສະພາບຕົວຈິງໃນແຕ່ລະໄລຍະ ແລະ ຮັບປະກັນຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຄຳແນະນຳ:**

### I. ການກຳນົດຄວາມເສຍຫາຍຢ່າງຫຼວງຫຼາຍ

ການກຳນົດຄວາມເສຍຫາຍຢ່າງຫຼວງຫຼາຍຈາກການນຳເຂົ້າສິນຄ້າທີ່ເພີ່ມຂຶ້ນ ຊຶ່ງມີ 8 ປັດໃຈທີ່ໄດ້ກຳນົດໃນມາດຕາ 9 ແມ່ນໃຫ້ພິຈາລະນາຈາກຂໍ້ມູນປ່ຽນແປງແບບກ້າວກະໂດດຂັ້ນ ຂອງແຕ່ລະປັດໃຈ ທຽບກັບຂໍ້ມູນຍ້ອນຫຼັງບໍ່ເກີນ ຫ້າ (5) ປີ. ຫາກພົບເຫັນວ່າ ໜຶ່ງໃນ 8 ປັດໃຈດັ່ງກ່າວ ມີການປ່ຽນແປງທີ່ກ້າວກະໂດດຂັ້ນ ແລະ ສົ່ງຜົນກະທົບຮ້າຍແຮງຕໍ່ຜູ້ຜະລິດສິນຄ້າພາຍໃນ ໃຫ້ຖືວ່າເປັນປັດໃຈໃນການກຳນົດຄວາມເສຍຫາຍຢ່າງຫຼວງຫຼາຍໄດ້ ຊຶ່ງມີລາຍລະອຽດ ດັ່ງນີ້:

1. ອັດຕາ ແລະ ປະລິມານການນຳເຂົ້າສິນຄ້າທີ່ເພີ່ມຂຶ້ນຢ່າງເດັດຖານ ແລະ ທຽບຖານ ແມ່ນໃຫ້ພິຈາລະນາຈາກຫຼັກຖານ ແລະ ຂໍ້ມູນການປ່ຽນແປງຂອງການນຳເຂົ້າສິນຄ້ານັ້ນ ວ່າມີປະລິມານການນຳເຂົ້າທີ່ເພີ່ມຂຶ້ນຢ່າງຊັດເຈນ ຫຼື ມີການປ່ຽນແປງປະລິມານການນຳເຂົ້າໃນສັດສ່ວນທີ່ເພີ່ມຂຶ້ນ ເມື່ອປຽບທຽບກັບຜົນຜະລິດຂອງສິນຄ້າທີ່ຄ້າຍຄືກັນ ຫຼື ແຂ່ງຂັນໂດຍກົງ ທີ່ຜະລິດພາຍໃນປະເທດ.

2. ສ່ວນແບ່ງຕະຫຼາດຂອງຜູ້ຜະລິດສິນຄ້າພາຍໃນຫຼຸດລົງ ແມ່ນໃຫ້ພິຈາລະນາຈາກການປ່ຽນແປງອັດຕາສ່ວນແບ່ງຕະຫຼາດທີ່ເພີ່ມຂຶ້ນຂອງສິນຄ້ານຳເຂົ້າ ທີ່ມີຕໍ່ຕະຫຼາດສິນຄ້າທັງໝົດພາຍໃນປະເທດ ເມື່ອປຽບທຽບກັບອັດຕາສ່ວນແບ່ງຕະຫຼາດປີຜ່ານມາ ຊຶ່ງມີສູດຄິດໄລ່ ດັ່ງນີ້:

   ***ສ່ວນແບ່ງຕະຫຼາດ = ອັດຕາສ່ວນແບ່ງຕະຫຼາດປີດຳເນີນການສືບສວນ - ອັດຕາສ່ວນແບ່ງຕະຫຼາດປີຜ່ານມາ.***

   ວິທີຄິດໄລ່ອັດຕາສ່ວນແບ່ງຕະຫຼາດ ມີດັ່ງນີ້:

   ***ອັດຕາສ່ວນແບ່ງຕະຫຼາດ = (ມູນຄ່າການຂາຍສິນຄ້ານຳເຂົ້າ ÷ ມູນຄ່າການຂາຍສິນຄ້າທັງໝົດພາຍໃນປະເທດ) x 100.***

3. ການປ່ຽນແປງຂອງລະດັບການຂາຍ ແມ່ນໃຫ້ພິຈາລະນາຈາກການຫຼຸດລົງຂອງປະລິມານ ຫຼື ມູນຄ່າການຂາຍສິນຄ້າທີ່ຄ້າຍຄືກັນ ຫຼື ແຂ່ງຂັນໂດຍກົງ ທີ່ຜະລິດພາຍໃນປະເທດ ຊຶ່ງມີສູດຄິດໄລ່ ດັ່ງນີ້:

   ***ລະດັບການຂາຍ = [(ປະລິມານ ຫຼື ມູນຄ່າການຂາຍສິນຄ້າປີດຳເນີນການສືບສວນ - ປະລິມານ ຫຼື ມູນຄ່າການຂາຍສິນຄ້າປີຜ່ານມາ) ÷ (ປະລິມານ ຫຼື ມູນຄ່າການຂາຍສິນຄ້າປີຜ່ານມາ)] x 100.***

   ວິທີຄິດໄລ່ປະລິມານ ຫຼື ມູນຄ່າການຂາຍສິນຄ້າ ມີດັ່ງນີ້:

   ***ປະລິມານການຂາຍສິນຄ້າ = ປະລິມານສິນຄ້າທີ່ຜະລິດໄດ້ - ສິນຄ້າທີ່ຄົງເຫຼືອ.***
   ***ມູນຄ່າການຂາຍສິນຄ້າ = ປະລິມານສິນຄ້າທີ່ຂາຍໄດ້ x ລາຄາສິນຄ້າຕໍ່ໜ່ວຍ.***

4. ການປ່ຽນແປງຂອງລະດັບຜົນຜະລິດ ແມ່ນໃຫ້ພິຈາລະນາຈາກການຫຼຸດລົງຂອງປະລິມານການຜະລິດສິນຄ້າທີ່ຄ້າຍຄືກັນ ຫຼື ແຂ່ງຂັນໂດຍກົງຂອງຜູ້ຜະລິດສິນຄ້າພາຍໃນ ຊຶ່ງມີສູດຄິດໄລ່ ດັ່ງນີ້:

   ***ລະດັບຜົນຜະລິດ = [(ຜົນຜະລິດສິນຄ້າປີດຳເນີນການສືບສວນ - ຜົນຜະລິດສິນຄ້າປີຜ່ານມາ) ÷ (ຜົນຜະລິດສິນຄ້າປີຜ່ານມາ)] x 100.***

5. ການປ່ຽນແປງຂອງລະດັບຜະລິດຕະພາບ ແມ່ນໃຫ້ພິຈາລະນາຈາກການຫຼຸດລົງ ຂອງປະສິດທິພາບໃນການຜະລິດສິນຄ້າທີ່ຄ້າຍຄືກັນ ຫຼື ແຂ່ງຂັນໂດຍກົງຂອງຜູ້ຜະລິດສິນຄ້າພາຍໃນ ຊຶ່ງມີສູດຄິດໄລ່ ດັ່ງນີ້:

   ***ລະດັບຜະລິດຕະພາບ = [(ຜະລິດຕະພາບປີດຳເນີນການສືບສວນ - ຜະລິດຕະພາບປີຜ່ານມາ) ÷ (ຜະລິດຕະພາບປີຜ່ານມາ)] x 100.***

   ວິທີຄິດໄລ່ຜະລິດຕະພາບ ມີດັ່ງນີ້:

   ***ຜະລິດຕະພາບ = ຜົນຜະລິດທັງໝົດ ÷ ປັດໃຈການຜະລິດ.***

   ສຳລັບປັດໃຈການຜະລິດປະກອບມີ: ວັດສະດຸ, ແຮງງານ ແລະ ຄ່າໃຊ້ຈ່າຍອື່ນໆທີ່ປະກອບເຂົ້າໃນຂະບວນການຜະລິດສິນຄ້າ.

6. ການປ່ຽນແປງຂອງລະດັບກຳລັງການຜະລິດ ແມ່ນໃຫ້ພິຈາລະນາຈາກການຫຼຸດລົງຂອງອັດຕາການນຳໃຊ້ກຳລັງການຜະລິດສິນຄ້າທີ່ຄ້າຍຄືກັນ ຫຼື ແຂ່ງຂັນກັນໂດຍກິງຂອງຜູ້ຜະລິດສິນຄ້າພາຍໃນ ເມື່ອປຽບທຽບກັບອັດຕາການນຳໃຊ້ກຳລັງການຜະລິດປີຜ່ານມາ ຊຶ່ງມີສູດຄິດໄລ່ ດັ່ງນີ້:

***ລະດັບກຳລັງການຜະລິດ = ອັດຕາການນຳໃຊ້ກຳລັງການຜະລິດປີດຳເນີນການສືບສວນ - ອັດຕາການນຳໃຊ້ກຳລັງການຜະລິດປີຜ່ານມາ.***

ວິທີຄິດໄລ່ອັດຕາການນຳໃຊ້ກຳລັງການຜະລິດ ມີດັ່ງນີ້:

***ອັດຕາການນຳໃຊ້ກຳລັງການຜະລິດ = (ຜົນຜະລິດຕົວຈິງ ÷ ຄວາມອາດສາມາດຜົນຜະລິດສູງສຸດ) x 100.***

ວິທີຄິດໄລ່ຄວາມອາດສາມາດຜົນຜະລິດສູງສຸດ ມີດັ່ງນີ້:

***ຄວາມອາດສາມາດຜົນຜະລິດສູງສຸດ = ຊົ່ວໂມງເຮັດວຽກຂອງເຄື່ອງຈັກ ÷ ເວລາຕົວຈິງທີ່ໃຊ້ເຂົ້າໃນການຜະລິດສິນຄ້າໜຶ່ງຫົວໜ່ວຍ.***

ຕົວຢ່າງ: ໂຮງງານຜະລິດຕູ້ເຢັນແຫ່ງໜຶ່ງ ມີເຄື່ອງຈັກ 50 ໜ່ວຍ, ກຳມະກອນໃຊ້ເຄື່ອງຈັກດັ່ງກ່າວໄດ້ 16 ຊົ່ວໂມງຕໍ່ມື້. ສະນັ້ນ, ຊົ່ວໂມງເຮັດວຽກ ຫຼື ຄວາມອາດສາມາດຂອງເຄື່ອງຈັກ = 50 ໜ່ວຍ x 16 ຊົ່ວໂມງ = 800 ຊົ່ວໂມງຕໍ່ມື້. ເວລາຕົວຈິງທີ່ນຳໃຊ້ເຂົ້າໃນການຜະລິດຕູ້ເຢັນໜຶ່ງໜ່ວຍແມ່ນ: 0.5 ຊົ່ວໂມງ (ເຄິ່ງຊົ່ວໂມງ).

ດັ່ງນັ້ນ, ຄວາມອາດສາມາດຜົນຜະລິດສູງສຸດ = 800 ຊົ່ວໂມງຕໍ່ມື້ ÷ 0.5 ຊົ່ວໂມງຕໍ່ໜ່ວຍ = 1,600 ໜ່ວຍຕໍ່ມື້.

7. ການປ່ຽນແປງຂອງລະດັບກຳໄລ ຫຼື ຂາດທຶນ ໃຫ້ພິຈາລະນາຈາກການຫຼຸດລົງຂອງຜົນກຳໄລ ຫຼື ການເພີ່ມຂຶ້ນຂອງການຂາດທຶນ ອັນເນື່ອງມາຈາກການຜະລິດ ແລະ ຈຳໜ່າຍສິນຄ້າທີ່ຄ້າຍຄືກັນ ຫຼື ແຂ່ງຂັນໂດຍກົງຂອງຜູ້ຜະລິດສິນຄ້າພາຍໃນ. ສູດຄິດໄລ່ປຽບທຽບອັດຕາການເພີ່ມຂຶ້ນ ຫຼື ຫຼຸດລົງຂອງລະດັບກຳໄລ ຫຼື ຂາດທຶນ ມີດັ່ງນີ້:

***ລະດັບກຳໄລ ຫຼື ຂາດທຶນ = [(ຜົນກຳໄລ ຫຼື ຂາດທຶນປີດຳເນີນການສືບສວນ - ຜົນກຳໄລ ຫຼື ຂາດທຶນປີຜ່ານມາ) ÷ (ຜົນກຳໄລ ຫຼື ຂາດທຶນປີຜ່ານມາ)] x 100.***

ວິທີຄິດໄລ່ຜົນກຳໄລ ຫຼື ຂາດທຶນ ມີດັ່ງນີ້:

***ຜົນກຳໄລ ຫຼື ຂາດທຶນ = [(ມູນຄ່າການຂາຍສິນຄ້າ) - (ຕົ້ນທຶນການຜະລິດ + ລາຍຈ່າຍບໍລິຫານ)].***

8. ການປ່ຽນແປງຂອງລະດັບການຈ້າງງານ ໃຫ້ພິຈາລະນາຈາກການຫຼຸດລົງຂອງປະລິມານການຈ້າງແຮງງານໃນການຜະລິດ ແລະ ແຮງງານທີ່ນຳໃຊ້ເຂົ້າໃນວຽກບໍລິຫານ ສິນຄ້າທີ່ຄ້າຍຄືກັນ ຫຼື ແຂ່ງຂັນໂດຍກົງຂອງຜູ້ຜະລິດສິນຄ້າພາຍໃນ ຊຶ່ງມີສູດຄິດໄລ່ ດັ່ງນີ້:

*ລະດັບການຈ້າງງານ = [(ປະລິມານການຈ້າງງານປີດໍາເນີນການສືບສວນ - ປະລິມານການຈ້າງງານປີຜ່ານມາ) ÷ (ປະລິມານການຈ້າງງານປີຜ່ານມາ)] x 100.*

ວິທີຄິດໄລ່ປະລິມານການຈ້າງງານ ມີດັ່ງນີ້:

*ປະລິມານການຈ້າງງານ = ແຮງງານການຜະລິດ + ແຮງງານບໍລິການ.*

## II. ການຈັດຕັ້ງປະຕິບັດ

ມອບໃຫ້ກົມນະໂຍບາຍການຄ້າຕ່າງປະເທດ, ກະຊວງອຸດສາຫະກໍາ ແລະ ການຄ້າ ເປັນເຈົ້າການໃນການປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນການຈັດຕັ້ງປະຕິບັດຄໍາແນະນໍາສະບັບນີ້ ໃຫ້ມີປະສິດທິຜົນສູງ.

ບົດແນະນໍາສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນ ແລະ ພາຍຫຼັງລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ (15) ວັນ.

**ລັດຖະມົນຕີ**